ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**********000**********

ກະຊວງການເງິນ

ເລກທີ 539 /ກງ

ນະຄອນຫລວງວຽງຈັນ, ວັນທີ 19 FEB 2014

# ຄຳແນະນຳຂອງລັດຖະມົນຕີ

# ກ່ຽວກັບ ການປະຕິບັດກົດໝາຍວ່າດ້ວຍການປະກັນໄພ

- ອີງຕາມກົດໝາຍວ່າດ້ວຍການປະກັນໄພສະບັບເລກທີ 06/ສພຊ, ລົງວັນທີ 21 ທັນວາ 2011;
- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 80/ນຍ, ລົງວັນທີ 28 ກຸມພາ 2007 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງການເງິນ.

## ລັດຖະມົນຕີ ອອກຄຳແນະນຳດັ່ງນີ້:

1. **ຈຸດປະສົງ**

ຄຳແນະນຳສະບັບນີ້ວາງອອກເພື່ອຜັນຂະຫຍາຍ ແລະ ແນະນຳອະທິບາຍບາງເນື້ອໃນທີ່ຈຳເປັນ ໃນການຈັດຕັ້ງປະຕິບັດກົດ ໝາຍວ່າດ້ວຍການປະກັນໄພສະບັບເລກທີ 06/ສພຊ, ລົງວັນທີ 21 ທັນວາ 2011 ໃຫ້ຄົບຖ້ວນ, ຊັດເຈນ, ເຂົ້າໃຈຖືກຕ້ອງແລະເປັນເອກະພາບທົ່ວປະເທດກ່ຽວກັບຫລັກການ, ການຄຸ້ມຄອງ ແລະການດຳເນີນທຸລະກິດປະກັນໄພໃຫ້ປະກົດຜົນເປັນຈິງແລະມີປະສິດທິຜົນພ້ອມທັງມີຄວາມເຂົ້າໃຈເນື້ອໃນທີ່ສອດຄ່ອງກັບສົນທິສັນຍາ ແລະ ສັນຍາສາກົນ ແລະ ພາກພື້ນທີ່ ສປປ ລາວ ໄດ້ເຂົ້າຮ່ວມເປັນພາຄີ.

2. **ການພັດທະນາຕະຫລາດປະກັນໄພ**

ຕະຫລາດປະກັນໄພ ຕ້ອງໄດ້ຮັບການພັດທະນາໂດຍສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ການເຕີບໂຕຂອງເສດຖະກິດແລະການຂະຫຍາຍຕົວຂອງພົນລະເມືອງ ພ້ອມທັງວາງເງື່ອນໄຂໃຫ້ຜູ້ປະກັນໄພສາມາດພັດທະນາຜະລິດຕະພັນປະກັນໄພແບບໃໝ່ອອກສູ່ຕະຫລາດປະກັນໄພ.

3. **ເງື່ອນໄຂການເຮັດສັນຍາປະກັນໄພ**

ກິດຈະການ, ຊັບສິນແລະ ຊັບສິນບັດຂອງພົນລະເມືອງລາວແລະ ຊາວຕ່າງດ້າວ ທີ່ມີຢູ່ສປປລາວ ທັງໝົດ ຕ້ອງໄດ້ເຮັດການປະກັນໄພກັບຜູ້ປະກັນໄພທີ່ໄດ້ຮັບອະນຸຍາດສ້າງຕັ້ງແລະດຳເນີນທຸລະກິດຢູ່ ສປປ ລາວ ເທົ່ານັ້ນ.

4. **ຄ່າທຳນຽມປະກັນໄພ**

ຜູ້ປະກັນໄພມີໜ້າທີ່ຄິດໄລ່ແລະສາມາດກຳນົດລະດັບຄ່າທຳນຽມປະກັນໄພໂດຍອີງໃສ່ເງື່ອນໄຂຂອງຕະຫລາດ ແລະ ການຄຸ້ມຄອງຄວາມສ່ຽງສຳລັບການປະກັນໄພທີ່ບໍ່ແມ່ນປະເພດບັງຄັບບົນພື້ນຖານການລາຍງານໃຫ້ອົງການຄຸ້ມຄອງວຽກງານປະກັນໄພຮັບຮູ້.

5. ຮູບແບບຂອງທຶນຈົດທະບຽນແລະເງິນຄໍ້າປະກັນ

ຜູ້ດໍາເນີນທຸລະກິດປະກັນໄພຕ້ອງມີທຶນຈົດທະບຽນຕໍ່າສຸດສິບຫົກຕື້ກີບຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍການປະກັນໄພໃນນັ້ນ: ແປດສິບເປີເຊັນ (80%) ຂອງທຶນຈົດທະບຽນຕ້ອງວາງມັດຈໍາໄວ້ນໍາທະນາຄານແຫ່ງສປປລາວຫລືທະນາຄານທຸລະກິດທີ່ຢູ່ ສປປ ລາວພາຍໃນ 90 ວັນສ່ວນທຶນຈົດທະບຽນທີ່ຍັງເຫລືອນັ້ນຕ້ອງຖອກໃຫ້ຄົບຖ້ວນພາຍໃນໜຶ່ງປີຫລັງຈາກຂຶ້ນທະບຽນ.

ການວາງເງິນຄໍ້າປະກັນຕາມທີ່ໄດ້ກໍານົດໄວ້ໃນມາດຕາ 24 ຂອງກົດໝາຍວ່າດ້ວຍການປະກັນໄພຜູ້ດໍາເນີນທຸລະກິດປະກັນໄພຕ້ອງວາງເງິນຄໍ້າປະກັນແຕ່ລະປະເພດ (ການປະກັນຊີວິດ ແລະ ການປະກັນໄພທົ່ວໄປ) ຈໍານວນໜຶ່ງສ່ວນສາມໄວ້ໃນບັນຊີທະນາຄານທີ່ມີການຫ້າມເຄື່ອນໄຫວ (blocked bank account)ຢູ່ທະນາຄານແຫ່ງສປປລາວຫລືຢູ່ທະນາຄານທຸລະກິດຢູ່ສປປລາວຊຶ່ງຕ້ອງແຈ້ງເລກບັນຊີເງິນຝາກທະນາຄານ ແລະ ຊື່ທະນາຄານຕໍ່ອົງການຄຸ້ມຄອງວຽກງານການປະກັນໄພໂດຍດ່ວນ ເພື່ອຮັບປະກັນການທົດແທນຄ່າເສຍຫາຍຕໍ່ຊີວິດ ແລະ ຊັບສິນແລະປົກປ້ອງຜົນປະໂຫຍດອັນຊອບທໍາຂອງຜູ້ໄດ້ຮັບການປະກັນໄພ. ຜູ້ປະກັນໄພສາມາດນໍາໃຊ້ວົງເງິນຄໍ້າປະກັນໄດ້ ສະເພາະແຕ່ເຫດການທີ່ໄດ້ກໍານົດໄວ້ໃນມາດຕາ 94 ຂອງກົດໝາຍວ່າດ້ວຍການປະກັນໄພ.

ວົງເງິນຈົດທະບຽນກໍອາດຈະມີມູນຄ່າສູງກ່ວາວົງເງິນຄໍ້າປະກັນ ຊຶ່ງວົງເງິນຄໍ້າປະກັນນີ້ແມ່ນຈະປະກອບດ້ວຍຊັບສິນໝູນວຽນ ແລະ ຊັບສິນທີ່ເປັນອຸປະກອນຕ່າງໆທີ່ນໍາໃຊ້ເຂົ້າໃນການດໍາເນີນທຸລະກິດໂດຍລວມແລ້ວມູນຄ່າຂອງວົງເງິນຄໍ້າປະກັນ ແລະ ຊັບສິນດັ່ງກ່າວນັ້ນຈະຕ້ອງມີມູນຄ່າບໍ່ໃຫ້ຕໍ່າກ່ວາ ສິບຫົກຕື້ກີບ.

ຜູ້ປະກັນໄພ ທີ່ໄດ້ຮັບການຂຶ້ນທະບຽນໃຫ້ດໍາເນີນທຸລະກິດປະກັນຊີວິດ ແລະ ປະກັນໄພທົ່ວໄປແລ້ວແຕ່ຍັງບໍ່ທັນໄດ້ແຍກໃບອະນຸຍາດດໍາເນີນທຸລະກິດປະກັນໄພຕາມການກໍານົດໄວ້ໃນກົດໝາຍວ່າດ້ວຍການປະກັນໄພ ຕ້ອງໄດ້ແຍກໃບອະນຸຍາດໍາເນີນທຸລະກິດປະກັນໄພເປັນອັນສະເພາະໃນທັນທີ ແລະ ສາມາດຖອກເງິນຄໍ້າປະກັນແຕ່ລະປະເພດໃຫ້ໝົດພາຍໃນສາມປີນັບແຕ່ມື້ໄດ້ຮັບໃບອະນຸຍາດດໍາເນີນທຸລະກິດໃໝ່. ຜູ້ດໍາເນີນທຸລະກິດປະກັນໄພ ມີສິດນໍາໃຊ້ເງິນຄໍ້າປະກັນພຽງແຕ່ໃນກໍລະນີທີ່ເກີດອຸບັດຕິເຫດທີ່ເກີດຂຶ້ນຕາມມາດຕາ 94 ຂອງກົດໝາຍວ່າດ້ວຍການປະກັນໄພ.

ການເຄື່ອນໄຫວບັນຊີເງິນຝາກຂອງທຶນຈົດທະບຽນແລະເງິນຄໍ້າປະກັນ, ຜູ້ດໍາເນີນທຸລະກິດປະກັນໄພຕ້ອງລາຍງານການເຄື່ອນໄຫວບັນຊີດັ່ງກ່າວໃຫ້ອົງການຄຸ້ມຄອງວຽກງານປະກັນໄພເປັນປົກກະຕິ, ລວມທັງບົດລາຍງານປະຈໍາປີ.

6. ການປະກັນໄພທົ່ວໄປແບບບັງຄັບ

ການເຮັດປະກັນໄພທົ່ວໄປແບບບັງຄັບ ຕ້ອງຖືກກໍານົດເງື່ອນໄຂການປະກັນໄພຂຶ້ນໂດຍກະຊວງການເງິນຊຶ່ງກວມເອົາເງື່ອນໄຂຕໍ່າສຸດທີ່ຈໍາເປັນດ້ວຍການກໍານົດຄ່າທໍານຽມ ແລະ ວົງເງິນປະກັນໄພແບບເດັດຖານທີ່ເໝາະສົມກັບສະພາບການຂະຫຍາຍຕົວຂອງເສດຖະກິດແຫ່ງຊາດແລະຕະຫລາດປະກັນໄພໃນແຕ່ລະໄລຍະ.

ການປະກັນໄພທົ່ວໄປແບບບັງຄັບຕ້ອງນໍາໃຊ້ໃນກໍລະນີ:

ກ. ຮັບຜິດຊອບຕໍ່ບຸກຄົນທີສາມສໍາລັບຍານພາຫະນະຂົນສົ່ງທັງໝົດ ທີ່ໄດ້ຮັບການຂຶ້ນທະບຽນ ຫລື ເຄື່ອນໄຫວ ຢູ່ ສປປ ລາວ;

ຂ. ຮັບຜິດຊອບຕໍ່ບຸກຄົນທີສາມສໍາລັບກິດຈະການ, ຊັບສິນແລະຊັບສິນບັດທີ່ອົງການຄຸ້ມຄອງວຽກງານການປະກັນໄພກໍານົດ;

ຄ. ຮັບຜິດຊອບຄວາມສ່ຽງອື່ນໆດັ່ງທີ່ອົງການຄຸ້ມຄອງວຽກງານການປະກັນໄພກໍານົດ.

ເພື່ອປົກປ້ອງຜົນປະໂຫຍດສ່ວນລວມ ແລະ ຮັບປະກັນຄວາມສ່ຽງທາງດ້ານຊັບສິນກໍ່ຄືຊີວິດຂອງສັງຄົມ ຈິ່ງໃຫ້ນໍາໃຊ້ຂໍ້ຕົກລົງຂອງລັດຖະມົນຕີວ່າການກະຊວງການເງິນສະບັບເລກທີ 0228/ກງ, ລົງວັນທີ 4 ກຸມພາ 2009 ວ່າດ້ວຍການກໍານົດອັດຕາໃໝ່ກ່ຽວກັບຄ່າທໍານຽມແລະ ສິນທົດແທນປະກັນໄພການຄໍ້າປະກັນຄວາມຮັບຜິດຊອບທາງແພ່ງຕໍ່ບຸກຄົນທີສາມຂັ້ນຕໍ່າສຸດແບບບັງຄັບຕາມກົດໝາຍວ່າດ້ວຍການປະກັນໄພຈົນກວ່າຈະມີນິຕິກໍາໃໝ່ອອກມາປ່ຽນແທນ.

7. **ການປະກັນໄພຍານພາຫະນະຂອງຜູ້ດໍາເນີນທຸລະກິດຂົນສົ່ງຜ່ານແດນແລະຍານພາຫະນະຂົນສົ່ງຜ່ານແດນທ້ອງຖະໜົນແບບບັງຄັບ**

ຍານພາຫະນະຂົນສົ່ງຜ່ານແດນບົນທ້ອງຖະໜົນ ແລະ ພາຫະນະຂົນສົ່ງທີ່ແລ່ນດ້ວຍເຄື່ອງຈັກທຸກປະເພດທີ່ຜູ້ດໍາເນີນທຸລະກິດຂົນສົ່ງຜ່ານແດນເປັນເຈົ້າຂອງ, ເຊົ່າຫລືນໍາໃຊ້ເວລາຂ້າມແດນຂອງ ສປປ ລາວ ອອກໄປຫລືເຂົ້າມາຈາກໜຶ່ງ ຫລື ຫລາຍປະເທດຢູ່ໃນພາກພື້ນອາຊຽນຕ້ອງມີປະກັນໄພອາຊຽນ (ບັດສີຟ້າ) ຕາມທີ່ໄດ້ກໍານົດໄວ້ໃນອະນຸສັນຍາ 5 ກ່ຽວກັບການເຊື່ອມໂຍງການປະກັນໄພຍານພາຫະນະທາງບົກແບບບັງຄັບຂອງອາຊຽນ.

8. **ການປະກັນໄພຍານພາຫະນະສາກົນແລະຂ້າມແດນ**

ຍານພາຫະນະທີ່ແລ່ນດ້ວຍເຄື່ອງຈັກບົນທ້ອງຖະໜົນ ເວລາຂ້າມຊາຍແດນຂອງ ສປປ ລາວ ຈາກໜຶ່ງ ຫລື ຫລາຍປະເທດ ຕ້ອງມີການປະກັນໄພທີ່ຄຸ້ມຄອງບຸກຄົນທີສາມແບບບັງຄັບ, ຄົນຂັບລົດ ແລະ ສິນຄ້າທີ່ຖືກຂົນສົ່ງທີ່ມີຜົນບັງຄັບໃຊ້ຢູ່ ສປປ ລາວ ຊຶ່ງກໍານົດໄວ້ໃນກົດໝາຍວ່າດ້ວຍການຂົນສົ່ງທາງບົກ.

9. **ການຂາຍປະກັນໄພໃຫ້ແກ່ຍານພາຫະນະຂົນສົ່ງຂ້າມແດນ**

ຜູ້ປະກັນໄພແລະຕົວແທນປະກັນໄພ ທີ່ຖືກສ້າງຕັ້ງຂຶ້ນຢ່າງຖືກຕ້ອງຕາມກົດໝາຍຢູ່ ສປປ ລາວ ມີໜ້າທີ່ຂາຍປະກັນໄພໃຫ້ແກ່ຍານພາຫະນະຂົນສົ່ງຂ້າມແດນທີ່ຂຶ້ນທະບຽນຢູ່ ສປປ ລາວ ຕາມລະບຽບກົດໝາຍທີ່ກໍານົດໄວ້.

ຫ້ອງການປະກັນໄພແຫ່ງຊາດ ແລະ ສະມາຊິກຂອງຫ້ອງການປະກັນໄພແຫ່ງຊາດມີໜ້າທີ່ຂາຍປະກັນໄພອາຊຽນ (ບັດສີຟ້າ) ໃຫ້ແກ່ຍານພາຫະນະຂົນສົ່ງຂ້າມແດນເຂົ້າ-ອອກ ສປປ ລາວ ລວມທັງພາຫະນະທີ່ຂຶ້ນທະບຽນຢູ່ ສປປ ລາວ ແລະ ຢູ່ໃນພາກພື້ນອາຊຽນ.

10. **ຂອບເຂດຄວາມສ່ຽງທີ່ຕ້ອງຮັບຜິດຊອບໂດຍກົງຂອງຜູ້ປະກັນໄພ**

ຂອບເຂດຄວາມສ່ຽງທີ່ຜູ້ປະກັນໄພເບື້ອງຕົ້ນ ຕ້ອງຮັບຜິດຊອບໂດຍກົງສູງສຸດຕ້ອງບໍ່ເກີນໜຶ່ງຕື້ຫົກຮ້ອຍລ້ານກີບສໍາລັບແຕ່ລະສັນຍາ; ຫຼັງຈາກນັ້ນຜູ້ປະກັນໄພເບື້ອງຕົ້ນ ຕ້ອງນໍາເອົາຊັບສິນທີ່ມີມູນຄ່າສ່ວນເກີນນັ້ນໄປເຮັດການປະກັນໄພຕໍ່ຊຶ່ງຜູ້ປະກັນໄພຕໍ່ຕ້ອງຮັບຜິດຊອບໂດຍກົງຕໍ່ສ່ວນຮັບເຮັດປະກັນໄພຕໍ່ນັ້ນ. ອົງການຄຸ້ມຄອງວຽກງານການປະກັນໄພ ມີໜ້າທີ່ປັບປຸງລະດັບຄວາມສ່ຽງດັ່ງກ່າວເປັນແຕ່ລະໄລຍະເພື່ອໃຫ້ສອດຄ່ອງກັບຕະຫລາດປະກັນໄພຕົວຈິງ.

ກໍລະນີສັນຍາປະກັນໄພເບື້ອງຕົ້ນໄດ້ຮັບການປະກັນໄພຕໍ່ໂດຍຜູ້ປະກັນໄພເບື້ອງຕົ້ນໄດ້ເຮັດການປະກັນໄພຕໍ່ຕາມສັນຍາ, ສັນຍາການປະກັນໄພເບື້ອງຕົ້ນຕ້ອງຖືກຄຸ້ມຄອງດ້ວຍເງື່ອນໄຂທີ່ກຳນົດໃນສັນຍາການປະກັນໄພຕໍ່.

ກໍລະນີສັນຍາປະກັນໄພເບື້ອງຕົ້ນໄດ້ຮັບການປະກັນໄພຕໍ່ຕາມຄວາມສະໝັກໃຈໂດຍຜູ້ປະກັນໄພເບື້ອງຕົ້ນບໍ່ສາມາດຮັບຜິດຊອບຄວາມສ່ຽງທີ່ສູງເກີນກວ່າຄວາມສາມາດນຳເອົາສັນຍາດັ່ງກ່າວໄປເຮັດການປະກັນໄພຕໍ່ແຕ່ຕ້ອງແຈ້ງໃຫ້ຜູ້ໄດ້ຮັບການປະກັນໄພຫລືຜູ້ຊື້ການປະກັນໄພເບື້ອງຕົ້ນຊາບ.

ພາຍຫລັງສຳເລັດການເຮັດສັນຍາປະກັນໄພຕໍ່ແລ້ວຜູ້ປະກັນໄພ ຕ້ອງລາຍງານໃຫ້ອົງການຄຸ້ມຄອງປະກັນໄພຮັບຊາບໂດຍກຳນົດເຂົ້າໃນບົດລາຍງານປະຈຳເດືອນແລະປີ, ຊຶ່ງປະກອບມີ: ລາຍການສັນຍາພ້ອມດ້ວຍຈຳນວນເງິນຄ່າທຳນຽມທີ່ເຮັດປະກັນໄພຕໍ່,ຊື່ ແລະ ທີ່ຢູ່ຂອງບໍລິສັດປະກັນໄພຕໍ່.

ອົງການຄຸ້ມຄອງວຽກງານການປະກັນໄພມີໜ້າທີ່ກຳນົດເງື່ອນໄຂລະອຽດເພີ່ມຕື່ມສຳລັບການຈັດຕັ້ງປະຕິບັດໃນຂໍ້ນີ້.

**11. ການຄິດໄລ່ຄັງສຳຮອງເພື່ອຮັບປະກັນຄວາມສ່ຽງທີ່ພວມປະຕິບັດແລະການຮຽກຮ້ອງທີ່ຍັງຄ້າງຈ່າຍ**

ເພື່ອຮັບປະກັນຄວາມສ່ຽງທີ່ພວມປະຕິບັດຂອງຜູ້ປະກັນໄພຕ້ອງເທົ່າກັບສີ່ສິບປີເຊັນ (40%) ຂອງເງິນປະກັນໄພສຸດທິທີ່ເກັບໄດ້ຈາກການປະກັນໄພແຕ່ລະປະເພດ ຊຶ່ງບໍ່ລວມເອົາສັນຍາໄລຍະສັ້ນທີ່ມີອາຍຸການຕໍ່າກວ່າ 31 ວັນ. ຄັງສຳຮອງ ຕ້ອງໄດ້ຮັບການປັບປຸງໃນແຕ່ລະເດືອນໂດຍອີງໃສ່ເງິນປະກັນໄພສຸດທິຂອງໄລຍະສິບສອງເດືອນຜ່ານມາ.

**12. ການລົງທຶນໃນເງິນທຶນ**

ສັດສ່ວນການລົງທຶນຂອງຜູ້ປະກັນໄພຕ້ອງບໍ່ລົງທຶນເກີນທີ່ກຳນົດໄວ້ດັ່ງລຸ່ມນີ້:

ກ) ຝາກເປັນບັນຊີປະຈຸບັນຫລືບັນຊີອອມຊັບນຳທະນາຄານທຸລະກິດຫລືຊື້ພັນທະບັດຂອງລັດຖະບານແຫ່ງສປປ ລາວ 100% ຫລື ;

ຂ) ຊື້ຮຸ້ນຂອງບໍລິສັດ20% ຫລື;

ຄ) ລົງທຶນໃນຊັບສິນທີ່ເປັນອະສັງຫາຣິມະຊັບ30% ຫລື;

ງ) ຊື້ພັນທະບັດຂອງບໍລິສັດ 30%.

**13. ພັນທະດ້ານວິຊາຊີບຂອງນາຍໜ້າປະກັນໄພ**

ຜູ້ທີ່ມີຈຸດປະສົງຂໍອະນຸຍາດດຳເນີນທຸລະກິດນາຍໜ້າປະກັນໄພຕ້ອງຄ້ຳປະກັນການປະກັນໄພແຕ່ລະປະເພດຊຶ່ງສາມາດຄ້ຳປະກັນດ້ວຍທຶນຈົດທະບຽນຫລືການຄ້ຳປະກັນດ້ານວິຊາຊີບ.

ນາຍໜ້າປະກັນໄພເຮັດໜ້າທີ່ເຄື່ອນໄຫວເປັນຜູ້ຕາງໜ້າໃຫ້ແກ່ຜູ້ຈະໄດ້ຮັບການປະກັນໄພແລະຜູ້ຈະຊື້ປະກັນໄພທີ່ມີຈຸດປະສົງຢາກຊື້ການປະກັນໄພກັບຜູ້ປະກັນໄພພ້ອມທັງຊ່ວຍເຫລືອຜູ້ປະກັນໄພໃນການພັດທະນາຍຸດທະສາດການຄຸ້ມຄອງຄວາມສ່ຽງທີ່ເໝາະສົມກ່ຽວກັບການວິໄຈຄວາມສ່ຽງແລະໃນລາຄາທີ່ເໝາະສົມທີ່ສຸດ, ເຮັດວຽກຮ່ວມກັບຜູ້ໄດ້ຮັບການປະກັນໄພເພື່ອລະບຸປະເພດຄວາມສ່ຽງທີ່ພວກເຂົາພົບພໍ້ເປັນປະຈຳແລະໃຫ້ຄວາມຮູ້ແກ່ຜູ້ໄດ້ຮັບການປະກັນວ່າມີສັນຍາປະກັນໄພໃດທີ່ມີສຳລັບຄວາມສ່ຽງແຕ່ລະປະເພດ.

ກະຊວງການເງິນມີໜ້າທີ່ກຳນົດເງື່ອນໄຂແລະລາຍລະອຽດໃນການຈັດຕັ້ງປະຕິບັດໃນຂໍ້ນີ້.

14. ຄຸນວຸດທິດ້ານວິຊາຊີບຂອງນາຍໜ້າປະກັນໄພ

ນາຍໜ້າປະກັນໄພ ຕ້ອງມີຄຸນວຸດທິດ້ານວິຊາຊີບປະກັນໄພທີ່ແນ່ນອນຄື: ຜ່ານການຝຶກອົບຮົມດ້ານການປະກັນໄພຢ່າງເປັນລະບົບແລະໄດ້ຮັບໃບຢັ້ງຢືນດັ່ງທີ່ອົງການຄຸ້ມຄອງວຽກງານປະກັນໄພ,ກະຊວງການເງິນໄດ້ກໍານົດສາມາດສະເໜີຂໍອະນຸຍາດສ້າງຕັ້ງແລະດໍາເນີນທຸລະກິດນາຍໜ້າປະກັນໄພໄດ້ພາຍໃຕ້ເງື່ອນໄຂທີ່ມີຂໍ້ຜູກພັນກັບຜູ້ປະກັນໄພຢູ່ສປປລາວຊຶ່ງອາດຈະເຮັດເປັນສັນຍາຫລືການຄໍ້າປະກັນຕາມທີ່ທັງສອງຝ່າຍໄດ້ຕົກລົງຮ່ວມກັນ.

15. ລະບຽບການແລະຂັ້ນຕອນສໍາລັບການອອກໃບອະນຸຍາດດໍາເນີນທຸລະກິດປະກັນໄພ

ພາຍຫລັງໄດ້ຮັບຄໍາຮ້ອງຂໍອະນຸຍາດສ້າງຕັ້ງ ແລະ ດໍາເນີນທຸລະກິດປະກັນໄພຊຶ່ງນັກລົງທຶນຕ້ອງປະກອບຂໍ້ມູນໃສ່ແບບພິມໃບຄໍາຮ້ອງດັ່ງທີ່ໄດ້ກໍານົດໄວ້ໃນມາດຕາ 11 ຂອງດໍາລັດວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ກະຊວງແຜນການແລະ ການລົງທຶນຕ້ອງສົ່ງຄໍາຮ້ອງດັ່ງກ່າວໃຫ້ກະຊວງການເງິນພິຈາລະນາ ແລະປະກອບຄໍາເຫັນດ້ານວິຊາການ. ນອກຈາກນັ້ນ, ນັກລົງທຶນຍັງຕ້ອງປະກອບຂໍ້ມູນເພີ່ມເຕີມດັ່ງຕໍ່ໄປນີ້:

1. ເອກະສານຢັ້ງຢືນວິຊາສະເພາະປະກັນໄພ;
2. ເອກະສານຢັ້ງຢືນແຫລ່ງທຶນ;
3. ແຜນການດໍາເນີນທຸລະກິດປະກັນໄພໄລຍະຫ້າປີທໍາອິດ;
4. ບັນຊີຊາຮຸ້ນຫລືຜູ້ຖືຮຸ້ນແລະຈໍານວນຮຸ້ນທີ່ຖື;
5. ກົດລະບຽບຂອງຜູ້ປະກັນໄພ.

ຜູ້ປະກັນໄພທີ່ລົງທຶນໂດຍຕ່າງປະເທດມີສິດກໍານົດຮູບແບບການດໍາເນີນທຸລະກິດເປັນບໍລິສັດຮ່ວມທຶນຫລືເປັນບໍລິສັດຕ່າງປະເທດລົງທຶນຮ້ອຍເປີເຊັນ (100%) ໂດຍສອດຄ່ອງກັບເງື່ອນໄຂດັ່ງທີ່ໄດ້ກໍານົດໄວ້ໃນສົນທິສັນຍາ ແລະ ສັນຍາສາກົນທີ່ສປປລາວໄດ້ເຂົ້າຮ່ວມເປັນພາຄີເປັນຕົ້ນແມ່ນອະນຸສັນຍາວ່າດ້ວຍການເຂົ້າເປັນສະມາຊິກຂອງອົງການການຄ້າໂລກແລະສັນຍາການຄ້າສອງຝ່າຍລາວ-ສະຫະລັດ.

ໃບອະນຸຍາດດໍາເນີນທຸລະກິດປະກັນໄພ ຕ້ອງອອກສະເພາະການປະກັນໄພແຕ່ລະປະເພດດັ່ງທີ່ໄດ້ກໍານົດໄວ້ໃນມາດຕາ 8 ຂອງກົດໝາຍວ່າດ້ວຍການປະກັນໄພ. ກໍລະນີຜູ້ດໍາເນີນທຸລະກິດປະກັນໄພທີ່ໄດ້ຮັບໃບອະນຸຍາດໃຫ້ສ້າງຕັ້ງ ແລະດໍາເນີນທຸລະກິດປະກັນໄພຜ່ານມາຫາກຍັງບໍ່ໄດ້ແຍກໃບອະນຸຍາດດໍາເນີນທຸລະກິດປະກັນໄພອອກເປັນແຕ່ລະປະເພດປະກັນໄພກໍຕ້ອງໄດ້ປະຕິບັດເຊັ່ນດຽວກັນເພື່ອໃຫ້ສອດຄ່ອງກັບບົດບັນຍັດທີ່ກໍານົດຢູ່ໃນຄໍາແນະນໍາສະບັບນີ້.

16. ກໍານົດເວລາຮຽກຮ້ອງສິນປະກັນໄພຫລືການທົດແທນຄ່າເສຍຫາຍ

ສິນປະກັນໄພ ຫລື ການທົດແທນຄ່າເສຍຫາຍໃຫ້ແກ່ຜູ້ໄດ້ຮັບຜົນປະໂຫຍດສາມາດຄິດໄລ່ໃນເວລາເຫດການເກີດຂຶ້ນ ແລະ ອາດຈະຈ່າຍເງິນສ່ວນໜຶ່ງໃຫ້ກ່ອນໃນເວລາດັ່ງກ່າວ. ພາຍຫລັງໄດ້ຮັບຜົນຂອງການປະເມີນຄ່າເສຍຫາຍແລ້ວ ຜູ້ປະກັນໄພຕ້ອງຈ່າຍສິນປະກັນໄພຫລື ການທົດແທນຄ່າເສຍຫາຍໃຫ້ແກ່ຜູ້ໄດ້ຮັບຜົນປະໂຫຍດຢ່າງຄົບຖ້ວນຫລືຕາມວົງເງິນປະກັນໄພດັ່ງທີ່ໄດ້ກໍານົດໄວ້ໃນສັນຍາ.

ໃນກໍລະນີທີ່ຜູ້ໄດ້ຮັບຜົນປະໂຫຍດທີ່ກໍານົດຢູ່ໃນສັນຍາປະກັນໄພຫາກເສຍຊີວິດ ຫລືໄດ້ຮັບບາດເຈັບຜູ້ທີ່ມີສິດສືບທອດສິດສາມາດໄດ້ຮັບສິນປະກັນໄພ, ການທົດແທນຄ່າເສຍຫາຍຫລື ວົງເງິນປະກັນໄພຕາມຫລັກການທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍການສືບທອດມໍລະດົກ.

17. **ການຊ່ວຍເຫລືອຜູ້ທີ່ໄດ້ຮັບເຄາະຮ້າຍຈາກອຸປະຕິເຫດບິນທ້ອງຖະໜົນທີ່ບໍ່ໄດ້ຮັບການປະກັນໄພ**

ໃນເມື່ອກອງທຶນປົກປ້ອງຜູ້ປະສົບເຄາະຮ້າຍບິນທ້ອງຖະໜົນຍັງບໍ່ທັນໄດ້ຮັບການສ້າງຕັ້ງຂຶ້ນ, ຜູ້ປະກັນໄພມີຄວາມຮັບຜິດຊອບຕໍ່ລາຍຈ່າຍຄ່າປິ່ນປົວທີ່ເກີດຂຶ້ນກັບບຸກຄົນທີສາມທີ່ໄດ້ຮັບການບາດເຈັບ ຫລື ຜູ້ໄດ້ຮັບເຄາະຮ້າຍຈາກອຸປະຕິເຫດລົດບິນທ້ອງຖະໜົນທີ່ກ່ຽວຂ້ອງກັບລົດທີ່ໄດ້ຮັບການປະກັນໄພ, ໂດຍບໍ່ຄຳນຶງເຖິງຄວາມຜິດ ຫຼື ຖືກ, ຢູ່ໃນວົງເງິນບໍ່ເກີນໜຶ່ງລ້ານແປດແສນກີບສຳລັບຜູ້ທີ່ໄດ້ຮັບບາດເຈັບແຕ່ລະຄົນ.ສຳລັບການເສຍຊີວິດຂອງບຸກຄົນທີສາມທີ່ໄດ້ຮັບເຄາະຮ້າຍຄ່າທົດແທນການເສຍຊີວິດບໍ່ເກີນສາມລ້ານກີບຕໍ່ຜູ້ເສຍຊີວິດໜຶ່ງຄົນ.

ວົງເງິນການທົດແທນລວມສູງສຸດທີ່ຜູ້ປະກັນໄພລົດຕ້ອງຈ່າຍ ຕ້ອງບໍ່ໃຫ້ເກີນສິບລ້ານກີບຕໍ່ອຸປະຕິເຫດ. ການທົດແທນເພີ່ມເຕີມແມ່ນອີງໃສ່ບົດບັນຍັດຂອງສັນຍາປະກັນໄພ.

ກະຊວງການເງິນສາມາດດັດແກ້ວົງເງິນດັ່ງກ່າວເປັນແຕ່ລະໄລຍະເພື່ອໃຫ້ສອດຄ່ອງກັບສະພາບຕົວຈິງຂອງການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມພາຍໃນປະເທດ. ໃນໄລຍະບໍ່ທັນມີນິຕິກຳໃໝ່ອອກມາປ່ຽນແທນແມ່ນໃຫ້ນຳໃຊ້ຄຳແນະນຳຂອງລັດຖະມົນຕີວ່າການກະຊວງການເງິນສະບັບເລກທີ 0772 ລົງວັນທີ 24 ເມສາ 2009 ໄປຈົນກວ່າຈະມີນິຕິກຳສະບັບໃໝ່.

18. **ກອງທຶນປົກປ້ອງຜູ້ປະສົບເຄາະຮ້າຍບິນທ້ອງຖະໜົນ**

ກອງທຶນປົກປ້ອງຜູ້ປະສົບເຄາະຮ້າຍບິນທ້ອງຖະໜົນຕ້ອງໄດ້ຮັບການສ້າງຕັ້ງຂຶ້ນ ເພື່ອຊ່ວຍເຫລືອ ແລະ ບັນເທົາທຸກໃຫ້ແກ່ຜູ້ທີ່ໄດ້ຮັບບາດເຈັບເນື່ອງມາຈາກອຸປະຕິເຫດບິນທ້ອງຖະໜົນຈາກຍານພາຫະນະທີ່ແລ່ນດ້ວຍເຄື່ອງຈັກ. ກອງທຶນມີໜ້າທີ່ຊຳລະເງິນຄ່າປິ່ນປົວໃຫ້ຜູ້ທີ່ໄດ້ຮັບບາດເຈັບຈາກອຸປະຕິເຫດບິນທ້ອງຖະໜົນ ໂດຍການນຳສົ່ງຜູ້ທີ່ໄດ້ຮັບບາດເຈັບໄປປິ່ນປົວສຸກເສີນຢູ່ໂຮງໝໍກ່ອນເຈົ້າໜ້າທີ່ປະກັນໄພເດີນທາງໄປຮອດສະຖານທີ່ເກີດເຫດ ແລະ ມີໜ້າທີ່ຮຽກເກັບຄ່າໃຊ້ຈ່າຍຕົວຈິງຈາກບຸກຄົນ ຫຼື ພາກສ່ວນທີ່ຮັບຜິດຊອບຕໍ່ອຸປະຕິເຫດໂດຍອີງໃສ່ເອກະສານທີ່ມີການຢັ້ງຢືນຄົບຖ້ວນຈາກໂຮງໝໍ.

ກອງທຶນ ແມ່ນໄດ້ມາຈາກແຫລ່ງທຶນທີ່ເປັນການປະກອບສ່ວນແບບບັງຄັບຊຶ່ງຖືກກຳນົດເປັນອັດຕາສ່ວນ ແລະ/ຫລື ເປັນຈຳນວນເດັດຖານທີ່ເກັບຈາກເງິນປະກັນໄພຍານພາຫະນະທີ່ແລ່ນດ້ວຍເຄື່ອງຈັກທັງໝົດທີ່ຜູ້ປະກັນໄພເປັນຜູ້ເກັບແລະຈາກອັດຕາສ່ວນທີ່ເກັບໄດ້ຈາກຄ່າປັບໃໝຈາກການລະເມີດກົດຈາລະຈອນ.

ກະຊວງການເງິນມີໜ້າທີ່ກຳນົດລາຍລະອຽດກ່ຽວກັບອັດຕາການປະກອບສ່ວນເງິນທຶນແບບບັງຄັບ, ຄ່າປັບໃໝ, ເງື່ອນໄຂສຳລັບການຄຸ້ມຄອງແລະການບໍລິຫານກອງທຶນ, ຂອບເຂດພັນທະ, ການຮຽກຮ້ອງ, ຂັ້ນຕອນ, ສິດ ແລະ ລາຍລະອຽດອື່ນໆ.

19. **ການທົດແທນສິດຂອງຜູ້ໄດ້ຮັບການປະກັນໄພ**

ໃນກໍລະນີບຸກຄົນທີສາມຊຶ່ງບໍ່ມີການປະກັນໄພໄດ້ກໍ່ຄວາມເສຍຫາຍ, ຜູ້ປະກັນໄພທີ່ໄດ້ຈ່າຍສິນປະກັນໄພແລ້ວມີສິດໄດ້ຮັບການທົດແທນສິດຂອງຜູ້ໄດ້ຮັບການປະກັນໄພ ແລະ ຍື່ນໜັງສືສະເໜີຂໍເບີກເງິນທົດແທນຄືນໃນຈຳນວນເທົ່າກັບສິນປະກັນໄພທີ່ໄດ້ຈ່າຍໄປແລ້ວ ຈາກບຸກຄົນທີສາມທີ່ເປັນຕົ້ນເຫດຂອງຄວາມເສຍຫາຍ.

ຜູ້ປະກັນໄພບໍ່ມີສິດຍື່ນໜັງສືສະເໜີຂໍເບີກເງິນທົດແທນຄືນຖ້າວ່າບຸກຄົນຜູ້ທີ່ເປັນຕົ້ນເຫດກໍ່ຄວາມເສຍຫາຍຫາກເປັນຜູ້ສືບຕະກຸນ ໂດຍກົງຫລືເປັນຄູ່ຜົວເມຍກັນເປັນຜູ້ທີ່ຖືກມອບໝາຍເຮັດໜ້າທີ່ແທນໃຫ້

ຜູ້ໄດ້ຮັບການປະກັນໄພ, ເປັນພະນັກງານຂອງຜູ້ໄດ້ຮັບການປະກັນໄພຫລື ແມ່ນຜູ້ທີ່ອາໄສຢູ່ແບບຖາວອນຢູ່ເຮືອນຂອງຜູ້ໄດ້ຮັບການປະກັນໄພເອັ້ນເສຍແຕ່ພວກກ່ຽວເຈຕະນາເສຍຄວາມເສຍຫາຍດັ່ງກ່າວ

**20. ການສ້າງຕັ້ງຕົວແທນປະກັນໄພ**

ຜູ້ປະກັນໄພສາມາດເລືອກເອົາບຸກຄົນແລະນິຕິບຸກຄົນເພື່ອເປັນຕົວແທນປະກັນໄພໃຫ້ແກ່ຕົນດ້ວຍການສ້າງຂໍ້ຜູກພັນ ຫລື ສັນຍາຮ່ວມກັນຢ່າງຖືກຕ້ອງຕາມລະບຽບກົດໝາຍຂອງ ສປປ ລາວ ພ້ອມທັງກຳນົດອັດຕາຄ່າບໍລິການສຳລັບການຂາຍປະກັນໄພ ແລະ ຂອບເຂດສິດແລະ ໜ້າວຽກຢ່າງລະອຽດໃຫ້ແກ່ຕົວແທນປະກັນໄພ ໂດຍສອດຄ່ອງຕາມມາດຕາ 76 ຂອງກົດໝາຍວ່າດ້ວຍການປະກັນໄພ ພ້ອມທັງສາມາດກຳນົດຈຳນວນເງິນຄ້ຳປະກັນທີ່ຕົວແທນຕ້ອງໄດ້ວາງເງິນຄ້ຳປະກັນ ຕ້ອງຖືກສົ່ງຄືນໃຫ້ແກ່ຕົວແທນໃນເວລາສັນຍາທີ່ເຮັດກັບຜູ້ປະກັນໄພຫາກໄດ້ສິ້ນສຸດລົງ.

**21. ພັນທະຂອງຜູ້ປະກັນໄພທີ່ມີຕໍ່ການສ້າງຕັ້ງຕົວແທນປະກັນໄພຂອງຕົນ**

ຜູ້ປະກັນໄພ ຕ້ອງສະໜອງການຝຶກອົບຮົມກ່ຽວກັບວຽກງານປະກັນໄພໃຫ້ແກ່ບຸກຄົນດັ່ງກ່າວກ່ອນທີ່ຈະກາຍເປັນຕົວແທນປະກັນໄພຂອງຕົນ ຫລື ກ່ອນຜູ້ກ່ຽວສ້າງຕັ້ງຫ້ອງການຕົວແທນເປັນນິຕິບຸກຄົນ ແລະຕ້ອງອອກໃບຢັ້ງຢືນໃຫ້ເພື່ອພິສູດວ່າມີຄຸນວຸດທິພຽງພໍໃນການສະໜອງການບໍລິການດ້ານປະກັນໄພ. ການຝຶກອົບຮົມທີ່ໄດ້ຮັບການຢັ້ງຢືນຕ້ອງມີຫລັກສູດບໍ່ໃຫ້ຫລຸດສາມສິບຊົ່ວໂມງ ຊຶ່ງປະກອບດ້ວຍຄຳແນະນຳກ່ຽວກັບ:

- ຜະລິດຕະພັນປະກັນໄພ ແລະ ການບໍລິການ ທີ່ຜູ້ປະກັນໄພໄດ້ຈຳໜ່າຍ ແລະ ສະໜອງ;
- ຂະບວນການດຳເນີນທຸລະກິດແລະການຈຳໜ່າຍ, ການບໍລິຫານ, ການບັນຊີຂອງຜູ້ປະກັນໄພ;
- ນິຕິກຳທີ່ກ່ຽວຂ້ອງ ແລະ ຫລັກການກ່ຽວກັບຈັນຍາບັນທີ່ຕ້ອງປະຕິບັດເພື່ອຄຸ້ມຄອງການເຄື່ອນໄຫວວຽກງານຂອງຕົວແທນ.

ອົງການຄຸ້ມຄອງວຽກງານປະກັນໄພ ສາມາດກຳນົດໃຫ້ຜູ້ທີ່ຈະເປັນຕົວແທນປະກັນໄພຕ້ອງຜ່ານການສອບເສັງກ່ອນ ແລະ ໄດ້ຮັບໃບຢັ້ງຢືນດ້ານວິຊາຊີບການປະກັນໄພຈຶ່ງສາມາດເປັນຕົວແທນປະກັນໄພໄດ້.

**22. ພັນທະຂອງຜູ້ປະກັນໄພທີ່ມີຕໍ່ຕົວແທນປະກັນໄພ**

ຜູ້ປະກັນໄພ ຕ້ອງຮັບຜິດຊອບການຄຸ້ມຄອງ, ກວດກາແລະຕິດຕາມຕໍ່ການເຄື່ອນໄຫວ ແລະ ການດຳເນີນທຸລະກິດຂອງຕົວແທນຂອງຕົນຢ່າງເຂັ້ມງວດຊຶ່ງກຳນົດໄວ້ໃນມາດຕາ 80 ຂອງກົດໝາຍວ່າດ້ວຍການປະກັນໄພ.

ຕົວແທນປະກັນໄພ ຕ້ອງເຄື່ອນໄຫວເປັນຜູ້ຕາງໜ້າໃຫ້ພຽງແຕ່ຜູ້ປະກັນໄພດຽວເທົ່ານັ້ນ ແລະ ຕ້ອງປະຕິບັດພັນທະຂອງຕົນຕາມເງື່ອນໄຂທີ່ໄດ້ກຳນົດໄວ້ໃນຂໍ້ຜູກພັນ ຫລື ສັນຍາວ່າດ້ວຍການສ້າງຕັ້ງຕົວແທນປະກັນໄພ. ທຸກການລະເມີດສັນຍາຜູກພັນລະຫວ່າງຜູ້ປະກັນໄພແລະ ຕົວແທນປະກັນໄພນັ້ນຜູ້ປະກັນໄພຍັງມີຄວາມຮັບຜິດຊອບໂດຍກົງຕໍ່ຄວາມເສຍຫາຍທີ່ຕົວແທນປະກັນໄພຂອງຕົນໄດ້ສ້າງຂຶ້ນ.

**ຄ່າທຳນຽມປະກັນໄພທີ່ຕົວແທນປະກັນໄພໄດ້ຮັບຈາກຜູ້ຊື້ການປະກັນໄພເຖິງແມ່ນຈະມອບໃຫ້ບໍລິສັດປະກັນໄພແມ່ຫລືບໍ່ກໍ່ຕາມໃຫ້ຖືເປັນຄວາມຮັບຜິດຊອບຂອງບໍລິສັດປະກັນໄພແມ່.**

## 23. ການຝຶກອົບຮົມໃນລະຫວ່າງການໃຫ້ບໍລິການສໍາລັບຕົວແທນປະກັນໄພ

ຜູ້ປະກັນໄພ ຕ້ອງສະໜອງການຝຶກອົບຮົມໃຫ້ແກ່ຕົວແທນປະກັນໄພ ໂດຍຜ່ານການເຮັດວຽກບໍລິການຕົວຈິງແບບເປັນປະຈໍາໃຫ້ແກ່ພະນັກງານ ແລະ ຕົວແທນຂອງຕົນ. ການຝຶກອົບຮົມດັ່ງກ່າວຕ້ອງຖ່າຍທອດຂໍ້ມູນ ແລະ ຄໍາແນະນໍາໃຫ້ແກ່ພະນັກງານແລະຕົວແທນຢູ່ຕະຫລອດເວລາກ່ຽວກັບການພັດທະນາໃໝ່ໆ ຢູ່ໃນຂະແໜງປະກັນໄພໃນນັ້ນລວມມີນິຕິກໍາ ແລະ ຜະລິດຕະພັນປະກັນໄພ ແລະ ຂັ້ນຕອນດໍາເນີນງານໃໝ່ໆ.

## 24. ການບັນຊີ ແລະ ສະຖິຕິ

ຜູ້ດໍາເນີນທຸລະກິດປະກັນໄພ ຕ້ອງປະຕິບັດຕາມຮູບແບບການບັນຊີວິສາຫະກິດດັ່ງທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍການບັນຊີຂອງ ສປປ ລາວ ໂດຍການແບ່ງບັນຊີອອກເປັນແຕ່ລະປະເພດການປະກັນໄພ. ລະບົບການບັນຊີຕ້ອງມີການຈົດກ່າຍໃຫ້ຄົບຖ້ວນ, ຈະແຈ້ງ, ໂປ່ງໃສ ແລະ ງ່າຍຕໍ່ການກວດກາ.

ສໍາລັບສະຖິຕິແຕ່ລະປະເພດປະກັນໄພ ຕ້ອງປະຕິບັດຕາມຫລັກການ, ລະບຽບການແລະ ຮູບແບບຂອງກະຊວງການເງິນກໍານົດໃນແຕ່ລະໄລຍະ.

ຜູ້ດໍາເນີນທຸລະກິດປະກັນໄພ ຕ້ອງສະຫລຸບລາຍງານການເຄື່ອນໄຫວການບັນຊີເປັນຕົ້ນ ໃບລາຍງານຜົນໄດ້ຮັບ, ໃບສະຫລຸບຊັບສົມບັດ, ໃບລາຍງານກ່ຽວກັບສ່ວນປ່ຽນແປງຂອງເງິນທຶນ ແລະ ສະຖິຕິອື່ນໆໃຫ້ແກ່ກະຊວງການເງິນເປັນລາຍເດືອນ, ງວດ, ຫົກເດືອນ ແລະ ປີ.

ຜູ້ປະກັນໄພ ຕ້ອງຈັດອັນດັບຄວາມໜ້າເຊື່ອຖືຂອງຕົນ ແລະ ພິມເຜີຍແຜ່ບົດລາຍງານການເງິນປະຈໍາປີຂອງຕົນໂດຍໂຄສະນາເຜີຍແຜ່ຜ່ານສື່ມວນຊົນ ເພື່ອເຮັດໃຫ້ສັງຄົມເຊື່ອໝັ້ນແລະ ສາມາດເຂົ້າເຖິງໄດ້ງ່າຍ.

## 25. ອົງການຄຸ້ມຄອງວຽກງານປະກັນໄພ

ອົງການຄຸ້ມຄອງວຽກງານປະກັນໄພ ທີ່ໄດ້ຮັບການສ້າງຕັ້ງຂຶ້ນຢູ່ໃນກະຊວງການເງິນມີໜ້າທີ່ຮັບຜິດຊອບຕິດຕາມກວດກາວຽກງານທັງໝົດຂອງທຸລະກິດປະກັນໄພ ໃນນັ້ນລວມເອົາການກໍານົດບັນຫາ ຫລື ສິ່ງທີ່ເປັນຈຸດອ່ອນໃນການຄຸ້ມຄອງຜູ້ປະກັນໄພ ຊຶ່ງອາດຈະກໍ່ໃຫ້ເກີດມີຄວາມສ່ຽງແບບເປັນລະບົບຢູ່ໃນທຸລະກິດປະກັນໄພ ຫລື ລະບົບການເງິນຂອງ ສປປ ລາວ.

ອົງການຄຸ້ມຄອງວຽກງານປະກັນໄພ ມີໜ້າທີ່ປະສານສົມທົບ ແລະ ພັດທະນານະໂຍບາຍແຫ່ງຊາດດ້ານຄວາມໝັ້ນຄົງຂອງວຽກງານປະກັນໄພສາກົນໃນນັ້ນລວມມີການເປັນຜູ້ຕາງໜ້າໃຫ້ແກ່ ສປປ ລາວ ຢູ່ສະມາຄົມອົງການຄຸ້ມຄອງປະກັນໄພສາກົນ ແລະ ພາກພື້ນ.

ອົງການຄຸ້ມຄອງວຽກງານປະກັນໄພ ຍັງຊ່ວຍຍວຽກລັດຖະມົນຕີໃນການເຈລະຈາສັນຍາສາກົນທີ່ກ່ຽວຂ້ອງກັບວຽກງານປະກັນໄພ ແລະ ຕິດຕາມປະເມີນການເຂົ້າເຖິງການປະກັນໄພ ທີ່ເອື້ອອໍານວຍໃຫ້ແກ່ຊຸມຊົນ ແລະ ຜູ້ບໍລິໂພກ, ປະຊາຊົນບັນດາເຜົ່າທີ່ການບໍລິການເຂົ້າໄປບໍ່ທົ່ວເຖິງ ແລະ ຜູ້ທີ່ມີລາຍໄດ້ຕໍ່າ ແລະ ລາຍໄດ້ປານກາງ.

## 26. ການສ້າງຕັ້ງຫ້ອງການປະກັນໄພແຫ່ງຊາດ

ກະຊວງການເງິນ ມີໜ້າທີ່ສ້າງຕັ້ງຫ້ອງການປະກັນໄພແຫ່ງຊາດ ຊຶ່ງເປັນການຈັດຕັ້ງຂອງຂະແໜງທຸລະກິດ ເພື່ອບໍລິຫານ ແລະ ຈັດຕັ້ງປະຕິບັດພັນທະຂອງຕົນຕອບສະໜອງການຈໍາໜ່າຍການປະກັນໄພສໍາລັບຍານພາຫະນະຂົນສົ່ງຜ່ານແດນຕາມທີ່ໄດ້ກໍານົດໄວ້ໃນອະນຸສັນຍາ 5 ຂອງອາຊຽນ. ກະຊວງການເງິນຍັງສົ່ງເສີມໃຫ້ມີການສ້າງຕັ້ງສະມາຄົມຜູ້ປະກັນໄພຕື່ມອີກ.

## 27. ໜ້າທີ່ແລະການຈັດຕັ້ງຂອງຫ້ອງການປະກັນໄພແຫ່ງຊາດ

ຫ້ອງການປະກັນໄພແຫ່ງຊາດ ແມ່ນການຈັດຕັ້ງຂອງທຸລະກິດເອກະຊົນຊຶ່ງສ້າງຕັ້ງຂຶ້ນບົນພື້ນຖານອະນຸສັນຍາ 5 ຂອງອາຊຽນວ່າດ້ວຍການປະກັນໄພແບບບັງຄັບສໍາລັບຍານພາຫະນະຜ່ານແດນ ໂດຍມີຈຸດປະສົງ ເພື່ອປະສານງານກັບສໍານັກງານປະກັນໄພຂອງບັນດາປະເທດສະມາຊິກອາຊຽນ, ອອກສະຕິກເກີອາຊຽນ ແລະ ສະຕິກເກີປະກັນໄພ ແລະ ມີສິດລົງລາຍເຊັນໃສ່ໃບຢັ້ງຢືນປະກັນໄພຂອງອາຊຽນ ແລະ ອໍານວຍຄວາມສະດວກໃນເວລາອຸປະຕິເຫດເກີດຂຶ້ນຢູ່ໃນດິນແດນຂອງ ສປປ ລາວ ຕາມລະບຽບກົດໝາຍຂອງ ສປປ ລາວ.

ສະມາຊິກຂອງສໍານັກງານປະກັນໄພແຫ່ງຊາດ ຕ້ອງປະກອບດ້ວຍຫົວໜ້າໜຶ່ງຄົນ ແລະ ຮອງຫົວໜ້າໜຶ່ງ ຫລື ສອງຄົນໂດຍອີງຕາມການເລືອກຕັ້ງຂອງສະມາຊິກສະມາຄົມຜູ້ປະກັນໄພ ແລະ ຮັບຮອງໂດຍກະຊວງການເງິນ.

## 28. ສະມາຄົມຜູ້ປະກັນໄພ

ສະມາຄົມຜູ້ປະກັນໄພ ແມ່ນການຈັດຕັ້ງທີ່ຄຸ້ມຄອງຜູ້ປະກັນໄພຊຶ່ງເຕົ້າໂຮມເອົາຜູ້ປະກັນໄພ ເພື່ອອໍານວຍຄວາມສະດວກໃຫ້ແກ່ການດໍາເນີນທຸລະກິດປະກັນໄພ ແລະ ປະຕິບັດສິດ ແລະ ພັນທະດັ່ງທີ່ໄດ້ກໍານົດໄວ້ໃນໝວດທີ VII ຂອງດໍາລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດ ສະບັບລົງວັນທີ 20 ພະຈິກ 2009.

ສະມາຄົມຜູ້ປະກັນໄພ ຕ້ອງຊຸກຍູ້ສະມາຊິກຂອງຕົນໃຫ້ເຄື່ອນໄຫວຕາມຫລັກການຈັດການບໍລິສັດໃຫ້ສອດຄ່ອງກັບຂະແໜງປະກັນໄພ. ສະມາຄົມຜູ້ປະກັນໄພ ຕ້ອງສ້າງກົດລະບຽບຂອງສະມາຄົມ ແລະ ກົດຈັນຍາທໍາສໍາລັບຜູ້ປະກັນໄພທັງໝົດ ທີ່ເຄື່ອນໄຫວຢູ່ ສປປ ລາວ. ກົດຈັນຍາທໍາ ຕ້ອງໄດ້ຮັບການຮັບຮອງຈາກອົງການຄຸ້ມຄອງການປະກັນໄພ.

ອີງຕາມກົດລະບຽບຂອງສະມາຄົມຜູ້ປະກັນໄພ ຫ້ອງການຜູ້ຕາງໜ້າຂອງບໍລິສັດຕ່າງປະເທດທີ່ເຄື່ອນໄຫວທຸລະກິດໃນຂະແໜງປະກັນໄພຢູ່ ສປປ ລາວ ສາມາດເຂົ້າເປັນສະມາຊິກຂອງສະມາຄົມ.

## 29. ການແກ້ໄຂຂໍ້ຂັດແຍ່ງດ້ານປະກັນໄພໂດຍຜ່ານຂະບວນການແກ້ໄຂດ້ານບໍລິຫານ

ຄູ່ກໍລະນີຂໍ້ຂັດແຍ່ງດ້ານປະກັນໄພ ສາມາດສະເໜີຂໍ້ຂັດແຍ່ງຕໍ່ອົງການຄຸ້ມຄອງປະກັນໄພ ຕ້ອງສ້າງຕັ້ງຄະນະກໍາມະການແກ້ໄຂຂໍ້ຂັດແຍ່ງດ້ານປະກັນໄພ ເພື່ອແກ້ໄຂຂໍ້ຂັດແຍ່ງດັ່ງກ່າວ.

ບຸກຄົນ, ນິຕິບຸກຄົນ ຫລື ການຈັດຕັ້ງສາມາດສະເໜີໃຫ້ຄະນະກໍາມະການແກ້ໄຂຂໍ້ຂັດແຍ່ງດ້ານປະກັນໄພພິຈາລະນາການດໍາເນີນດ້ານບໍລິຫານທີ່ຕົນເຫັນວ່າບໍ່ສອດຄ່ອງຕາມກົດໝາຍວ່າດ້ວຍການປະກັນໄພ ຫລື ຄໍາແນະນໍາສະບັບນີ້.

ຄະນະກໍາມະການແກ້ໄຂຂໍ້ຂັດແຍ່ງດ້ານປະກັນໄພ ຕ້ອງປະກອບດ້ວຍຫົວໜ້າອົງການຄຸ້ມຄອງປະກັນໄພ (ຫລື ຜູ້ຕາງໜ້າ) ເປັນປະທານ, ເຈົ້າໜ້າທີ່ຂອງກະຊວງການເງິນແລະອົງການຄຸ້ມຄອງປະກັນໄພ ແລະ ຜູ້ຕາງໜ້າຈາກບໍລິສັດປະກັນໄພ ແລະ ຜູ້ຊື້ປະກັນໄພ.

ຄູ່ກໍລະນີ ຕ້ອງນໍາສະເໜີຂໍ້ຂັດແຍ່ງພ້ອມດ້ວຍເອກະສານທີ່ກ່ຽວຂ້ອງ ແລະ ຫລັກຖານຕໍ່ຄະນະກໍາມະ ການແກ້ໄຂຂໍ້ຂັດແຍ່ງດ້ານປະກັນໄພ. ຂອບເຂດເວລາສໍາລັບການຍື່ນຂໍ້ຂັດແຍ່ງແມ່ນສາມສິບ (30) ວັນນັບແຕ່ມື້ມີການຂັດຄ້ານການຕົກລົງ ຫລື ການປະຕິບັດຂອງຄູ່ກໍລະນີອີກຝ່າຍໜຶ່ງ.

ພາຍໃນໄລຍະສີ່ສິບຫ້າ (45) ວັນນັບແຕ່ໄດ້ຮັບຄໍາຮ້ອງທຸກ, ຄະນະກໍາມະການແກ້ໄຂຂໍ້ຂັດແຍ່ງດ້ານປະກັນໄພ ຕ້ອງສະຫລຸບການແກ້ໄຂຂໍ້ຂັດແຍ່ງ ແລະ ແຈ້ງຜົນການຕັດສິນໃຫ້ຄູ່ກໍລະນີທັງໝົດຊາບ. ກໍລະນີທີ່ບໍ່ມີຄໍາຕອບຮອດມື້ທີ່ກໍານົດໄວ້ ຕ້ອງຖືວ່າເປັນການປະຕິເສດຄໍາຮ້ອງທຸກດັ່ງກ່າວ.

ໃນກໍລະນີທີ່ມີການຂັດຄ້ານຜົນການຕັດສິນຂອງຄະນະກໍາມະການແກ້ໄຂຂໍ້ຂັດແຍ່ງດ້ານປະກັນໄພຄູ່ກໍລະນີສາມາດຂັດຄ້ານຜົນການຕັດສິນ ໂດຍການຍື່ນຟ້ອງຕໍ່ສານປະຊາຊົນພາຍໃນສາມສິບ (30) ວັນນັບແຕ່ມື້ໄດ້ຮັບຜົນການຕັດສິນດັ່ງກ່າວ.

**30. ການແກ້ໄຂຂໍ້ຂັດແຍ່ງດ້ານປະກັນໄພໂດຍຜ່ານການໄກ່ເກ່ຍແລະການຕັດສິນ**

ຂໍ້ຂັດແຍ່ງທີ່ເກີດຂຶ້ນລະຫວ່າງຜູ້ປະກັນໄພທີ່ໄດ້ຂຶ້ນທະບຽນຢູ່ ສປປ ລາວ ແລະ ຜູ້ຊື້ປະກັນໄພຫລືຄູ່ກໍລະນີອື່ນສາມາດແກ້ໄຂຕາມບົດບັນຍັດຂອງກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງດ້ານເສດຖະກິດໃນນັ້ນລວມມີການນໍາໃຊ້ການບໍລິການໄກ່ເກ່ຍ ແລະ ການຕັດສິນທີ່ດໍາເນີນໂດຍສູນແກ້ໄຂຂໍ້ຂັດແຍ່ງດ້ານເສດຖະກິດ, ຂະບວນການໄກ່ເກ່ຍຂອງເອກະຊົນ, ຄະນະກໍາມະການຕັດສິນພາກເອກະຊົນພາຍໃນປະເທດ ຫລື ຄະນະກໍາມະການສະເພາະກິດ ແລະ ຄະນະກໍາມະການຕັດສິນຂອງຕ່າງປະເທດໃນກໍລະນີເໝາະສົມ.

**31. ນະໂຍບາຍຕໍ່ຜູ້ມີຜົນງານ**

ນະໂຍບາຍຕໍ່ຜູ້ມີຜົນງານດັ່ງທີ່ໄດ້ກໍານົດໄວ້ໃນມາດຕາ 120 ຂອງກົດໝາຍວ່າດ້ວຍການປະກັນໄພຕ້ອງປະຕິບັດດັ່ງຕໍ່ໄປນີ້:

- ບຸກຄົນຫລືນິຕິບຸກຄົນຂອງພາກລັດ ແລະ ພາກເອກະຊົນທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການປະກັນໄພຈະໄດ້ຮັບການຍ້ອງຍໍ ຫລື ນະໂຍບາຍອື່ນຕາມການສະເໜີຂອງອົງກອນຄຸ້ມຄອງວຽກງານປະກັນໄພ.
- ນັກລົງທຶນພາຍໃນ ແລະ ຕ່າງປະເທດທີ່ມີຜົນງານດີເດັ່ນໃນການດໍາເນີນທຸລະກິດປະກັນໄພທີ່ສອດຄ່ອງກັບກົດໝາຍວ່າດ້ວຍການປະກັນໄພສະບັບ ແລະ ລະບຽບກົດໝາຍອື່ນໆ ທີ່ກ່ຽວຂ້ອງຂອງ ສປປ ລາວ ເປັນຕົ້ນໃນການເຮັດໃຫ້ການດໍາເນີນທຸລະກິດປະກັນໄພມີປະສິດທິຜົນ ແລະ ປະຕິບັດພັນທະໄດ້ຢ່າງຖືກຕ້ອງ ແລະ ຄົບຖ້ວນ, ຈະໄດ້ຮັບການຍ້ອງຍໍ ຫລື ໄດ້ຮັບນະໂຍບາຍອື່ນ ຕາມລະບຽບກົດໝາຍບົນພື້ນຖານການສະເໜີຂອງອົງກອນຄຸ້ມຄອງວຽກງານປະກັນໄພ.

**32. ຜົນສັກສິດ**

ຄໍາແນະນໍາສະບັບນີ້ ມີຜົນບັງຄັບໃຊ້ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ. ສ່ວນຂໍ້ກໍານົດຂອງນິຕິກໍາໃດທີ່ນອກຈາກລັດຖະທໍາມະນູນ ແລະ ກົດໝາຍ ຫາກຂັດກັບຂໍ້ກໍານົດຂອງຄໍາແນະນໍາສະບັບນີ້ ລ້ວນແຕ່ຖືກລົບລ້າງ.

**ລັດຖະມົນຕີວ່າການກະຊວງການເງິນ**

ພູເພັດ ຄໍາພູນວົງ